ສຳນັກງານໃຫຍ່

ເລກທີ: 3607/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 10 NOV 2025

# ໜັງສືແຈ້ງ

**ເຖິງ:** ທ່ານລູກຄ້າ, ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ເຄົາລົບ ແລະ ນັບຖື;
**ເລື່ອງ:** ຊີ້ແຈງປະເດັນກະແສສັງຄົມອອນລາຍ ກ່ຽວກັບການມອບເງິນສົດເຂົ້າບັນຊີທະນາຄານ

- ອີງຕາມຂ່າວກະແສສັງຄົມ ກ່ຽວກັບການມອບເງິນເຂົ້າບັນຊີທະນາຄານ ແລ້ວເງິນບໍ່ຄົບໃນຄັ້ງວັນທີ 05/11/2025 ທີ່ຜ່ານມາ;
- ອີງຕາມຜົນພິສູດຫລັກຖານຕາມກ້ອງວົງຈອນປິດແບບຊ້ອງໜ້າກັບລູກຄ້າຄັ້ງວັນທີ 07/11/2025

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນແຈ້ງມາຍັງບັນດາທ່ານຊາບ ວ່າ ໃນວັນທີ 5 ພະຈິກ 2025 ໄດ້ມີຂ່າວໃນສື່ສັງຄົມອອນລາຍກ່ຽວກັບການມອບເງິນສົດເຂົ້າທະນາຄານ ແຕ່ເງິນ ບໍ່ຄົບຕາມຈຳນວນທີ່ລູກຄ້າແຈ້ງມອບ. ພາຍຫຼັງໄດ້ຮັບຊາບຂ່າວດັ່ງກ່າວ ທຄຕລ ໄດ້ມີການກວດສອບເພື່ອຊອກຫາ ຄວາມຈິງຕໍ່ກັບເຫດການດັ່ງກ່າວ ເຊິ່ງພົບວ່າ ໃນວັນດັ່ງກ່າວໄດ້ມີລູກຄ້າເຂົ້າມາໃຊ້ບໍລິການຝາກເງິນສົດເຂົ້າບັນຊີນຳ ທຄຕລ ແທ້. ແຕ່ຜ່ານການກວດສອບ ແລະ ພິສູດຫຼັກຖານຕາມກ້ອງວົງຈອນປິດຄືນຢ່າງລະອຽດແລ້ວເຫັນວ່າ ຂັ້ນ ຕອນການກວດຮັບເງິນຈາກລູກຄ້າ ຕະຫຼອດຮອດການນັບເງິນຕົວຈິງ ໄດ້ດຳເນີນຜ່ານເຄື່ອງກວດນັບເງິນຢ່າງຖືກ ຕ້ອງຕາມຂັ້ນຕອນທີ່ ທຄຕລ ກຳນົດ ເຊິ່ງຈຳນວນເງິນສົດທີ່ລູກຄ້າດັ່ງກ່າວນຳມາມອບຕົວຈິງ ແມ່ນໜ້ອຍກວ່າ ຈຳນວນທີ່ລູກຄ້າໄດ້ຂຽນໄວ້ເບື້ອງຕົ້ນໃນແບບຟອມມອບເງິນ.

ເພື່ອໃຫ້ລູກຄ້າໄດ້ເຂົ້າໃຈ ແລະ ໝັ້ນໃຈໃນຂັ້ນຕອນການດຳເນີນງານຂອງ ທຄຕລ, ທຄຕລ ໄດ້ເຊື້ອເຊີນ ລູກຄ້າທັງສອງທ່ານ (ຜູ້ໂພສຂ່າວ ແລະ ຜູ້ມອບເງິນຕົວຈິງ) ເຂົ້າມາທະນາຄານ ໃນວັນທີ 07 ພະຈິກ 2025 ເພື່ອ ກວດເບິ່ງຫຼັກຖານການມອບເງິນໃນມື້ນັ້ນ. ຜ່ານການກວດເບິ່ງຫຼັກຖານ ຈາກບັນທຶກກ້ອງວົງຈອນປິດ ລູກຄ້າທັງ ສອງທ່ານ ເຫັນວ່າ ພະນັກງານ ທຄຕລ ໄດ້ຮັບ ແລະ ກວດນັບເງິນໂດຍຖືກຕ້ອງຄົບຖ້ວນຕາມຈຳນວນເງິນຕົວຈິງທີ່ ລູກຄ້າໄດ້ຖືມາແລ້ວ, ສ່ວນເງິນທີ່ລູກຄ້າອ້າງວ່າບໍ່ພໍຕາມທີ່ຜູ້ກ່ຽວໄດ້ໂພສລົງໃນສື່ອອນລາຍນັ້ນ ເປັນຄວາມເຂົ້າໃຈ ຜິດຂອງລູກຄ້າເອງ ເນື່ອງຈາກເວລາທີ່ລູກຄ້າຈົກເອົາເງິນອອກມາຈາກກະເປົ໋າ ເພື່ອມອບໃຫ້ພະນັກງານທະນາຄານ ເງິນດັ່ງກ່າວບໍ່ໄດ້ເປັນເງິນທີ່ມັດ ຫຼື ໜີບເປັນຫົວໄວ້ແຕ່ຢ່າງໃດ. ຕໍ່ເຫດການດັ່ງກ່າວ, ລູກຄ້າທັງສອງທ່ານ ໄດ້ ຍອມຮັບວ່າເງິນບໍ່ຄົບແຕ່ເບື້ອງຕົ້ນແທ້ ແລະ ໄດ້ສະແດງຄວາມຂອບໃຈຕໍ່ ທຄຕລ ທີ່ໄດ້ຊີ້ແຈງ ແລະ ໃຫ້ຄວາມ ກະຈ່າງແຈ້ງ ດ້ວຍຂໍ້ມູນ ແລະ ຫຼັກຖານ ພ້ອມທັງກ່າວຂໍໂທດ ທຄຕລ ທີ່ໄດ້ມີການໂພສຂໍ້ຄວາມລົງໃນສື່ສັງຄົມ ອອນລາຍ ຈົນກໍ່ໃຫ້ເກີດກະແສວິພາກວິຈານເປັນວົງກວ້າງ.

ທຄຕລ ຂໍຢັ້ງຢືນຕໍ່ລູກຄ້າ ກໍ່ຄືສັງຄົມວ່າ ຍາມໃດ ທຄຕລ ກໍ່ຍຶດໝັ້ນດຳເນີນທຸລະກິດດ້ວຍຄວາມໂປ່ງໃສ ແລະ ຖືຜົນປະໂຫຍດຂອງລູກຄ້າເປັນສຳຄັນຕະຫຼອດມາ. ກໍລະນີທີ່ລູກຄ້າມີຂໍ້ສົນໃຈ ຫຼື ຂໍ້ສົງໃສໃດໆ ກ່ຽວກັບ ການບໍລິການຂອງ ທຄຕລ ກໍ່ສາມາດຕິດຕໍ່ກັບພະນັກງານຂອງທະນາຄານໂດຍກົງ ຫຼື ຜ່ານຊ່ອງທາງການຕິດຕໍ່ທາງ

ການຂອງ ທຄຕລ ເພື່ອຂໍຄຳອະທິບາຍ-ຊີ້ແຈງ; ຄວນຫຼີກລ່ຽງການຂຽນ ຫຼື ໂພສລົງສື່ອອນລາຍ ໂດຍບໍ່ຮູ້ຂໍ້ມູນທີ່ແທ້ຈິງ.

ພ້ອມດຽວກັນນັ້ນ, ທຄຕລ ຮຽກຮ້ອງເຖິງຜູ້ໂພສຂໍ້ຄວາມລົງໃນສື່ສັງຄົມອອນລາຍ ຄວນມີຫຼັກຖານທີ່ຖືກຕ້ອງ ແລະ ສອດຄ່ອງເສຍກ່ອນຈຶ່ງໂພສ. ສຳລັບຜູ້ເສບຂ່າວ ຫຼື ຜູ້ສະແດງຄຳເຫັນກໍ່ຄວນມີສະຕິ ແລະ ຄວນພິຈາລະນາຢ່າງຖີ່ຖ້ວນ ກ່ອນມີຄຳເຫັນ. ໃນຕໍ່ໜ້າ, ກໍລະນີພົບເຫັນຜູ້ໂພສຂໍ້ຄວາມ ຫຼື ຜູ້ສະແດງຄວາມເຫັນທີ່ນຳໄປສູ່ຄວາມເສຍຫາຍເປັນຕົ້ນແມ່ນດ້ານ ກຽດ, ຊື່ສຽງ, ພາບພົດ ແລະ ຄວາມເຊື່ອໝັ້ນຂອງ ທຄຕລ ທັງທາງກົງ ແລະ ທາງອ້ອມ ທຄຕລ ຂໍສະຫງວນສິດໃນການດຳເນີນຄະດີຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງຢ່າງເຄັ່ງຄັດ ເພື່ອປົກປ້ອງຜົນປະໂຫຍດຂອງອົງກອນ.

ທຄຕລ ຂໍຂອບໃຈບັນດາລູກຄ້າ, ຜູ້ຖືຮຸ້ນ ແລະ ນັກລົງທຶນທຸກທ່ານທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ສະໜັບສະໜູນ ທຄຕລ ດ້ວຍດີຕະຫຼອດມາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ